# ມະຫາຊົນທະນາຄານແຫ່ງ ສປປ ລາວ

# ເຊື່ອມຊຶມເອກະສານກຳມະບານ





ໃນຫວ່າງມໍ່ໆມານີ້, ຄະນະກຳມະບານຮາກຖານທະນາຄານແຫ່ງ ສປປ ລາວ ໄດ້ຈັດຕັ້ງການເຊື່ອມຊຶມເອກະສານກຳມະບານໃຫ້ແກ່ມະຫາຊົນຜູ້ກ້າວໜ້າໃນທົ່ວທະນາຄານແຫ່ງ ສປປ ລາວ ຈຳນວນ 100 ສະຫາຍ ໂດຍການໃຫ້ກຽດເຜີຍແຜ່ຂອງສະຫາຍ ນາງ ແສງດາວວີ ວົງຄຳຊາວ ຮອງປະທານຄະນະກຳມະບານຮາກຖານທະນາຄານແຫ່ງ ສປປ ລາວ ເຊິ່ງໄດ້ຈັດຂຶ້ນຢູ່ສຳນັກງານທະນາຄານດັ່ງກ່າວ.

ໃນການຄົ້ນຄວ້າເຊື່ອມຊຶມເອກະສານດັ່ງກ່າວ, ສະຫາຍນາງ ແສງດາວວີ ວົງຄຳຊາວ ກໍໄດ້ຍົກໃຫ້ເຫັນພາລະກຳປະຫວັດສາດຂອງຊົນຊັ້ນກຳມະກອນ ໂດຍສະເພາະມູນເຊື້ອແຫ່ງການກຳເນີດ ແລະ ເຕີບໃຫຍ່ຂອງອົງການຈັດຕັ້ງກຳມະບານລາວໃນແຕ່ລະໄລຍະ, ກົດໝາຍວ່າດ້ວຍກຳມະບານ ແລະ ຄວາມໝາຍ-ສຳຄັນຂອງຄຳຂວັນ 2 ດີ 5 ສິດ ເປັນເຈົ້າຂອງກຳມະບານລາວໃນໄລຍະໃໝ່.

ຜ່ານການຄົ້ນຄວ້າຮ່ຳຮຽນໃນຄັ້ງນີ້ໄດ້ເຮັດໃຫ້ມະຫາຊົນຜູ້ທີ່ກ້າວໜ້າພາຍໃນທະນາຄານແຫ່ງ ສປປ ລາວ ເຫັນໄດ້ມູນເຊື້ອ, ທາດແທ້, ຜົນງານ ແລະການເຄື່ອນໄຫວອັນດີເດັ່ນຂອງອົງການຈັດຕັ້ງກຳມະບານ ເຊິ່ງຜ່ານຂະບວນວິວັດອັນຍາວນານແຫ່ງການຕໍ່ສູ້ຕ້ານຜູ້ຮຸກຮານ ກໍຄືການປະກອບສ່ວນເຂົ້າໃນການສ້າງສາພັດທະນາປະເທດຊາດພາຍໃຕ້ແນວທາງປ່ຽນແປງໃໝ່ ໂດຍສະເພາະການຈັດຕັ້ງປະຕິບັດມະຕິກອງປະຊຸມຄັ້ງທີ IX ຂອງພັກ ກໍຄືການປະຕິບັດ 4 ບາດກ້າວບຸກທະລຸ ໃຫ້ໄດ້ຮັບໝາກຜົນດີເປັນກ້າວໆ.